## ຖະແຫຼງການແຫ່ງຊາດ ກ່ຽວກັບຜົນກອງປະຊຸມສຸດຍອດ ວ່າດ້ວຍຊັບສິນດ້ານມະນຸດ ຫືອຂໍ້ພິເສດ: ການເລັ່ງການຟື້ນຟູການຮຽນຮູ້ ໃນສະພາບການຂອງ ໂຄວິດ-19 ຄັ້ງວັນທີ 25 ພຶດສະພາ 2023 ທີ່ ນະຄອນຫຼວງວຽງຈັນ

1. **ການຮຽນຮູ້ຂັ້ນພື້ນຖານ**

- ພື້ນຖານຂອງຊັບສິນດ້ານມະນຸດ ແມ່ນມີຢູ່ໃນມະນຸດເຮົາແຕ່ຍັງໄວເດັກ. ສັດສ່ວນຂອງເດັກນ້ອຍທີ່ຮຽນຈົບຊັ້ນປະຖົມສຶກສາ ແຕ່ບໍ່ສາມາດອ່ານ ແລະ ເຂົ້າໃຈບົດອ່ານຂອງເຂົາເຈົ້າໄດ້ ແມ່ນສັນຍານທີ່ບົ່ງບອກເຖິງຄຸນນະພາບຂອງການສຶກສາໂດຍລວມພາຍໃນປະເທດ, ດັ່ງນັ້ນ ສິ່ງທີ່ສາມາດຊຸກຍູ້ທ່າແຮງບົ່ມຊ້ອນທີ່ຈະໄດ້ຈາກກຸ່ມປະຊາກອນໃນໄວອອກແຮງງານ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ ກໍ່ແມ່ນ ການຮຽນຮູ້ຂັ້ນພື້ນຖານ ເຊິ່ງເປັນປັດໄຈຕົ້ນຕໍສໍາລັບການຮຽນຮູ້ອື່ນໆ ແລະ ທັກສະທີ່ສູງຂຶ້ນ ທີ່ເດັກນ້ອຍ ແລະໄວໜຸ່ມຕ້ອງມີ ໂດຍຜ່ານການສຶກສາ.
- ການຮຽນຮູ້ພື້ນຖານແມ່ນສໍາຄັນ ເພື່ອເຮັດໃຫ້ເດັກນ້ອຍທຸກຄົນບັນລຸຄວາມສາມາດຂອງເຂົາເຈົ້າຢ່າງເຕັມທີ່ ແລະ ມີສ່ວນຮ່ວມໃນສັງຄົມ. ຮັບປະກັນໃຫ້ເດັກນ້ອຍໄດ້ມີການຮຽນຮູ້ພື້ນຖານ ໃຫ້ກາຍເປັນພົນລະເມືອງທີ່ດີຂອງຊາດ ເພື່ອເປັນເຈົ້າການພັດທະນາຕົນເອງ, ມີຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດໃຫ້ມີຄວາມສົມດຸນ ແລະ ຍືນຍົງ.
- ພວກເຮົາໃຫ້ຄໍາໝັ້ນສັນຍາຈະສືບຕໍ່ປັບປຸງການສຶກສາຂັ້ນພື້ນຖານໃຫ້ມີຄຸນນະພາບສູງຂຶ້ນ ໂດຍສຸມໃສ່ປັບປຸງ ແລະ ພັດທະນາການຮຽນຮູ້ຂັ້ນພື້ນຖານ ເພື່ອເຮັດໃຫ້ສັດສ່ວນເດັກນ້ອຍທີ່ຮຽນຈົບຊັ້ນປະຖົມສຶກສາ ສາມາດອ່ານ ແລະ ເຂົ້າໃຈຂໍ້ຄວາມງ່າຍດາຍ ເພີ່ມຂຶ້ນ.

2. **ການເຂົ້າເຖິງເດັກນ້ອຍທຸກຄົນ ແລະ ການຮັກສາເຂົາເຈົ້າໃຫ້ສືບຕໍ່ຮຽນຢູ່ໃນໂຮງຮຽນ**

ນັບຕັ້ງແຕ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການເຂົ້າຮຽນຂອງນັກຮຽນຫຼຸດລົງ ແລະ ການປະລະການຮຽນໃນທຸກລະດັບ ແມ່ນເພີ່ມຂຶ້ນ. ເພື່ອຮັບປະກັນການຟື້ນຟູ ແລະ ເລັ່ງຟື້ນຟູການຮຽນຮູ້, ພວກເຮົາຈະຕ້ອງໄດ້ຮີບຮ້ອນສຸມໃສ່ສິ່ງເສີມໃຫ້ເດັກນ້ອຍທຸກຄົນໄດ້ກັບເຂົ້າມາຮຽນຄືນ ແລະ ໃຫ້ເຂົາເຈົ້າສືບຕໍ່ຮຽນຈົນຈົບ, ຮັບປະກັນໃຫ້ນັກຮຽນໃຫ້ໄດ້ຮຽນບໍາລຸງ ແລະ ຮຽນຄືນໃຫ້ຫຼາຍຂຶ້ນ ແລະ ດໍາເນີນການສິດສອນໃຫ້

ເດັກນ້ອຍຕາມລະດັບການຮຽນຮູ້ຂອງເຂົາເຈົ້າໃນປະຈຸບັນ; ສະໜັບສະໜູນ ແລະ ຊ່ວຍເຫຼືອຄູອາຈານ ເພື່ອໃຫ້ຄູມີເຄື່ອງມືໃຊ້ສໍາລັບການສິດສອນ ແລະ ສະໜັບສະໜູນຊຸກຍູ້ຊ່ວຍເຫຼືອດ້ານສຸຂະພາບ, ໂພຊະນາການ ແລະ ຈິດຕະສັງຄົມ, ຊີວິດການເປັນຢູ່ທີ່ດີຂອງຄູ ແລະ ເດັກທຸກຄົນ.

## 3. ການສະໜອງງົບປະມານໃຫ້ແກ່ຂະແໜງການສຶກສາຢ່າງເໝາະສົມ

ລັດຖະບານຮັບຮູ້ວ່າການສະໜອງງົບປະມານ ໃຫ້ແກ່ຂະແໜງການສຶກສາຢ່າງເໝາະສົມ, ມີປະສິດທິພາບ ແລະ ມີຄວາມເທົ່າທຽມ ແມ່ນມີຄວາມສໍາຄັນຕໍ່ການເລັ່ງການຟື້ນຟູການຮຽນຮູ້ພາຍຫລັງສະພາບການລະບາດຂອງພະຍາດ ໂຄວິດ-19, ຄຽງຄູ່ກັບການຮັບປະກັນສິດທິຂອງເດັກທຸກຄົນໃນການສຶກສາທີ່ມີຄຸນນະພາບ ແລະ ມີຄວາມເທົ່າທຽມ ເພື່ອເສີມຂະຫຍາຍຊັບສິນດ້ານມະນຸດຂອງ ສປປ ລາວ ແລະ ບັນລຸໄດ້ວິໄສທັດຂອງປະເທດໃນການກ້າວໄປສູ່ການພັດທະນາເສດຖະກິດທີ່ທັນສະໄໝ ແລະ ເສດຖະກິດທີ່ມີການຂະຫຍາຍຕົວສູງຂຶ້ນ. ພວກເຮົາທຸກພາກສ່ວນ ທັງພາກລັດ, ຄູ່ຮ່ວມພັດທະນາ, ເອກະຊົນ ແລະ ທຸກພາກສ່ວນໃນສັງຄົມ ລວມທັງພໍ່ແມ່ຜູ້ປົກຄອງ ຈະຕ້ອງໄດ້ເຮັດວຽກຮ່ວມກັນ ເພື່ອປະກອບສ່ວນທາງດ້ານວິຊາການ ແລະ ທຶນຮອນ, ນໍາໃຊ້ເຕັກໂນໂລຊີ ແລະ ຫັນປ່ຽນການສຶກສາ ໃຫ້ສອດຄ່ອງກັບສະພາບໃນປັດຈຸບັນ ແລະ ສາມາດຮັບມືໄດ້ກັບການປ່ຽນແປງທີ່ຈະເກີດຂຶ້ນໃນອະນາຄົດ ເພື່ອພັດທະນາຊັບສິນດ້ານມະນຸດ ໃຫ້ມີຄຸນນະພາບສູງຂຶ້ນ. ລັດຖະບານຢືນຢັນວ່າ ຈະພະຍາຍາມເພີ່ມສ່ວນແບ່ງງົບປະມານແຫ່ງຊາດໃຫ້ແກ່ຂະແໜງການສຶກສາ ໃຫ້ສອດຄ່ອງກັບຄາດໝາຍທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສຶກສາເທື່ອລະກ້າວ, ລວມທັງສ່ວນແບ່ງງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ.